ວາລະສານ PCAP2
PCAP2 NEWSLETTER
ສະບັບທີ 6 ເດືອນ 7 ປີ 2010

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງການລົງທຶນຂອງລັດ

Project for Enhancing Capacity in Public Investment Program (PIP) Management (PCAP2)

●ໜ້າ 2-3 ອາສາສະໝັກ PCAP2
●ໜ້າ 4: ບົດລາຍງານ 4th JCC

ກໍລະກົດ 2010 ສະບັບທີ . 6

ບົດແນະນຳ

# ເປົ້າໝາຍໃໝ່ ແລະ ແນວໂນ້ມໃໝ່

ຫົວໜ້າທີມທີ່ປຶກສາຂອງໂຄງການພີແຄັບ 2
ທ່ານ ອິຊິໂຣະ ໂອກຸມູຣະ

ປະຈຸບັນ MPI ໄດ້ກະກຽມໃສ່ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ (NSEDP) ຄັ້ງທີ່ 7 ແຕ່ປີ 2011ເຖິງປີ 2015 ຢ່າງຕໍ່ເນື່ອງ. ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດຄັ້ງທີ່ 7 ນີ້ມີເປົ້າໝາຍເພື່ອໃຫ້ບັນລຸເປົ້າໝາຍສະຫັດສະວັດແຫ່ງການພັດທະນາປີ 2015 ຊຶ່ງເປັນແຜນທີ່ມີຄວາມໝາຍສຳຄັນເພື່ອຍັບມໍ່ເຂົ້າສູ່ເປົ້າໝາຍຜົນສຳເລັດຂອງ ປີ 2020. ເຖິງແມ່ນວ່າແຜນນີ້ຍັງຢູ່ໃນສະບັບຮ່າງກໍ່ຕາມ ການຈະເລີນເຕີບໂຕທາງດ້ານເສດຖະກິດ ໃນຊຸມປີທີ່ຜ່ານມາ ມີເຖິງ 7 - 8 ສ່ວນຮ້ອຍ ແລະການຮັກສາການຈະເລີນເຕີບໂຕໃຫ້ຢູ່ລະດັບນີ້ຢ່າງຕໍ່ເນື່ອງ ແລະກາຍເປັນດັດຊະນີບົ່ງບອກເຖິງການພັດທະນາສັງຄົມໄດ້ນັ້ນຈຶ່ງເປັນແຜນການແລະແນວທາງທີ່ມີຄວາມໝາຍຄວາມສຳຄັນທີ່ສຸດ.

ໂຄງການລົງທຶນຂອງລັດ(PIP)ແມ່ນໜຶ່ງໃນຄວາມສຳເລັດຂອງແຜນພັດທະນາເສດຖະກິດສັງຄົມ (NSEDP). ມັນແມ່ນຄວາມຈິງທີ່ວ່າຕະຫຼອດໄລຍະ 10 ປີທີ່ຜ່ານມາ ເສດຖະກິດຂອງປະເທດລາວໄດ້ມີການຂະຫຍາຍຕົວຂຶ້ນກໍ່ຍ້ອນມີການລົງທຶນຂອງລັດ ແຕ່ຄວາມຄາດຫວັງຂອງການຂະຫຍາຍຕົວນັ້ນຈະເພີ່ມສູງຂຶ້ນອີກໄດ້ ຫຼື ບໍ່ ງົບປະມານທີ່ໃຊ້ ເຂົ້າໃນການພັດ ທະນານັ້ນມີປະສິດທິຜົນແທ້ຫຼືບໍ່ ແມ່ນຍັງມີອີກຫຼາຍຈຸດທີ່ຈະຕ້ອງໄດ້ປັບປຸງ. ການຈະເລີນເຕີບໂຕຂອງ ປະເທດໃນໄລຍະ10 ປີທີ່ຜ່ານມາແມ່ນຍ້ອນມາຈາກໂຄງການຂະໜາດໃຫຍ່ຕ່າງໆເຊັ່ນບໍ່ແຮ່ ແລະເຂື່ອນພະລັງງານ ໄຟຟ້າ ສ່ວນສະພາບການປັບປຸງດ້ານການສຶກສາ ແລະ ສຸຂະພາບນັ້ນ ແມ່ນໄດ້ຮັບການສະໜັບສະໜູນຈາກ ຜູ້ໃຫ້ທຶນເປັນສ່ວນໃຫຍ່. ໃນທາງກັບກັນ ຕົວຢ່າງຂອງໂຄງການການລົງທຶນຂອງລັດທີ່ປະສົບຜົນສຳເລັດຢູ່ຕາມ ຂັ້ນບ້ານ ເມືອງ ແລະ ແຂວງຕ່າງໆນັ້ນ ແມ່ນບໍ່ຄ່ອຍມີໃຫ້ເຫັນຫຼາຍປານໃດ.

ໃນຊ່ວງຖົດຖອຍຂອງເສດຖະກິດໂລກຊຸມປີທີ່ຜ່ານມານັ້ນບໍ່ໄດ້ສົ່ງຜົນກະທົບຮຸນແຮງຕໍ່ຄວາມຢູ່ດີມີສຸກຂອງປະເທດລາວ. ສິ່ງນີ້ເປັນເຄື່ອງພິສູດອັນດີທີ່ວ່າຄວາມຖົດຖອຍຂອງເສດຖະກິດໂລກໄດ້ສົ່ງເສີມ ໃຫ້ສັກກະຍາພາບການພັດທະນາ ຂອງປະເທດລາວສູງຂຶ້ນ. ເພື່ອຮັກສາການຈະເລີນເຕີບໂຕດັ່ງກ່າວຕໍ່ໄປ ແຫຼ່ງຂອງງົບປະມານພາຍໃນປະເທດທີ່ໄດ້ຈາກໂຄງການລົງທຶນຂອງລັດ ເພື່ອສົ່ງໄປໃຫ້ ບ້ານ ເມືອງ ແລະແຂວງຕ່າງໆນັ້ນ ຈະຕ້ອງນຳໃຊ້ໃຫ້ໄດ້ຮັບໝາກຜົນສູງຂຶ້ນ ແລະສິ່ງສຳຄັນກໍ່ຄືຕ້ອງມາຈາກຄວາມສາມາດ ແລະ ບົນພື້ນຖານການສ້າງສາພັດທະນາປະເທດຂອງຕົນ.

ຈາກ PCAP1 ໄປເຖິງ PCAP2, ເມື່ອມີການປັບປຸງກົນໄກວິທີການກວດກາການບໍລິຫານຂອງPIP ແລະການບໍລິຫານວຽກງານການຈັດການງົບປະມານພາຍໃນປະເທດແລ້ວຈະຊ່ວຍໃຫ້ກົນໄກການບໍລິຫານດ້ານການເງິນມີການປັບປຸງ ແລະ ຮັບປະກັນໃຫ້ພະນັກງານລັດເຮັດວຽກດ້ວຍຄວາມສະດວກຫຍິ່ງຂຶ້ນ. ຄວາມພະຍາຍາມໃນການປັບປຸງນີ້ໄດ້ຄ່ອຍໆຂະຫຍາຍໂຕອອກ ແລະ ເຮັດໃຫ້ວົງຈອນງົບປະມານປະຈຳປີ ທີ່ໄດ້ມາຈາກ PIP ຂອງການບໍລິຫານ ການຈັດການທັງໝົດ ມີການປັບປຸງທີ່ດີຂຶ້ນເປັນກ້າວໆ. ອີກດ້ານໜຶ່ງຜົນທີ່ຈະໄດ້ຮັບພາຍຫຼັງການສິ້ນສຸດໂຄງການ PIP ແລະຜົນທີ່ຍັງຈະໄດ້ຮັບຕໍ່ໄປ, ຫຼື ການສ້າງຄວາມເຂັ້ມແຂງໃຫ້ PIPເພື່ອໃຫ້ມີວິໄສທັດທີ່ແກ່ຍາວອອກໄປໄດ້ນັ້ນຍັງມີຄວາມຈຳເປັນຈະຕ້ອງໄດ້ມີການປັບປຸງຕື່ມອີກ.

ແຜນພັດທະນາເສດຖະກິດ ສັງຄົມແຫ່ງຊາດ ຄັ້ງທີ່ 7 ຈະໄດ້ໄຂຂຶ້ນໃນເດືອນຕຸລາ ປີ 2010 ນີ້. ເພື່ອເຮັດໃຫ້ເປົ້າ ໝາຍໃໝ່ນີ້ປະສົບຜົນສຳເລັດ ຫຼື ເວົ້າອີກຢ່າງໜຶ່ງກໍ່ຄືເພື່ອເຮັດໃຫ້ຄວາມໝາຍທີ່ແທ້ຈິງຂອງ PIP ໃນການເຮັດໃຫ້PIP ກາຍເປັນຂັ້ນຕອນທີ່ສຳຄັນສ່ວນໜຶ່ງຂອງຜົນສຳເລັດຂອງ NSEDP ໄດ້ນັ້ນ PCAP ຈະຕ້ອງໄດ້ໝູນໃຊ້ວິໄສທັດໄລຍະ ຍາວຄືດັ່ງທີ່ໄດ້ກ່າວມາຂ້າງເທິງ. ກະຊວງແຜນການ ແລະ ການລົງທຶນ ພ້ອມກັບ ໂຄງການ ພີແຄັບ 2 ຈະມີການຈັດການ ບໍລິຫານໃນລະດັບທີ່ກ້າວໜ້າຂຶ້ນໄປເລື້ອຍໆໄດ້ນັ້ນຈະຕ້ອງມີການກະຕຸກຊຸກຍູ້ຕະຫຼອດໄປ.

# ສະມາຊິກ 2 ທ່ານ ຂອງອົງການອາສາສະໝັກການຮ່ວມມື ກັບຕ່າງປະເທດຂອງປະເທດຍີ່ປຸ່ນ ຮ່ວມກັບໂຄງການ ພີແຄັບ 2

## ນີ້ແມ່ນການແນະນຳຕົວ ອາສາສະມໝັກຈາກ ແຂວງ ສາລະວັນ ທີ່ມີສ່ວນຮ່ວມໃນກິດຈະກຳຂອງໂຄງການ ພີແຄັບ 2

## ທ່ານ ໂຕໂຢໂຕະ ນິຊິມູລະ

### ພະແນກແຜນການ ແລະ ການລົງທຶນ ແຂວງ ສາລະວັນ (DPI)

ສະບາຍດີ!

ຍິນດີທີ່ໄດ້ຮູ້ຈັກ. ຂ້າພະເຈົ້າຊື່ໂຕໂຢໂຕະ ນິຊິມູຣະ ແລະ ປະຈຸບັນນີ້ແມ່ນເຮັດວຽກຢູ່ພະແນກແຜນການ ແລະ ການລົງທຶນຂອງແຂວງສາລະວັນ ໃນຕຳແໜ່ງສະມາຊິກຂອງອົງການອາສາສະໝັກການຮ່ວມມືກັບຕ່າງປະເທດຂອງປະເທດຍີ່ປຸ່ນ (JOCV: Japan Overseas Cooperation Volunteers). ຫລັງຈາກຮຽນຈົບຈາກມະຫາວິທີຍາໄລຢູ່ປະເທດຍີ່ປຸ່ນແລ້ວ ຂ້າພະເຈົ້າກໍ່ໄດ້ເຮັດ ວຽກກັບບໍລິສັດເອກະຊົນພັກໜຶ່ງ ແລະ ຕໍ່ມາກໍ່ໄດ້ໄປຮຽນຕໍ່ຢູ່ປະເທດອັງກິດ ແລະ ໄດ້ຈົບປະລິນຍາໂທທາງດ້ານການພັດທະນາ. ຫລັງຈາກນັ້ນຂ້າພະເຈົ້າໄດ້ເຮັດວຽກຢູ່ໃນມາຫາວິທະຍາໄລພັກໜຶ່ງແລ້ວກໍ່ໄດ້ມີໂອກາດມາປະເທດລາວນີ້. ຢູ່ພະແນກແຜນການ ແລະ ການລົງທຶນແມ່ນມີພະນັກງານຫຼາຍຄົນ, ທຸກມື້ຂ້າພະເຈົ້າແມ່ນມີຫຼາຍຢ່າງທີ່ຕ້ອງຮຽນຮູ້ເຊິ່ງຫຼາຍກວ່າສິ່ງທີ່ຂ້າພະເຈົ້າຕ້ອງສອນ. ໃນບັນຍາກາດຂອງການເຮັດວຽກໃນແຕ່ລະມື້ຂ້າພະເຈົ້າຈົດຈຳໄວ້ສະເໝີວ່າມີວຽກສອງຢ່າງທີ່ຈະຕ້ອງປະຕິບັດເພື່ອເຮັດໃຫ້ກິດຈະກຳຂອງພິແຄັບ 2 ຊຶມຊັບເຂົ້າໄປໃນແຂວງສາລະວັນນີ້. ສິ່ງທຳອິດຄື ການຊ່ວຍເຫຼືອພະນັກງານລັດ ໃນການພັດທະນາຄວາມສາມາດຂອງພວກເຂົາເຈົ້າກ່ຽວກັບ ກິດຈະກຳຂອງພິແຄັບ 2. ຈຸດປະສົງກໍ່ຄືຢາກໃຫ້ພວກເຂົາເຈົ້າເຂົ້າໃຈເນື້ອໃນ ແລະ ລະບົບຂອງພິແຄັບ 2 ໃຫ້ດີ ແລະ ປະຕິບັດຕາມ. ສິ່ງທີສອງທີ່ຈະຕ້ອງເຮັດກໍ່ຄືການຄົ້ນຫາບັນຫາທີ່ອາດມີໃນລະບົບຂອງພິແຄັບ 2. ໃນເວລາທີ່ຄົ້ນພົບບັນຫາແລ້ວຂ້າພະເຈົ້າກໍ່ຈະລາຍງານໃຫ້ຊ່ຽວຊານໂຄງການພິແຄັບ 2 ຮັບຮູ້ ແລະ ໃຫ້ດຳເນີນການແກ້ໄຂ. ລະບົບຂອງພິແຄັບ 2 ຈະກາຍເປັນສິ່ງທີ່ບໍ່ມີປະໂຫຍດຖ້າພະນັກງານລັດບໍ່ນຳໃຊ້ໃຫ້ດີ. ດັ່ງນັ້ນ, ພິແຄັບ 2 ຈະຕ້ອງສ້າງລະບົບທີ່ດີໃນເວລາທີ່ມີການຊຶມຊັບໃນລະບົບທາງຂ້າງລຸ່ມ ແລະ ມີການພິຈະລະນາຈາກຂ້າງເທິງ. ຕັ້ງແຕ່ນີ້ເປັນຕົ້ນໄປ ຂ້າພະເຈົ້າຈະເນັ້ນໃສ່ການຊ່ວຍເຫຼືອ ການພັດທະນາຄວາມສາມາດຂອງພະນັກງານລັດ. ຈຸດປະສົງຂອງຂ້າພະເຈົ້າກໍ່ຄືເຮັດໃຫ້ພະນັກງານພະແນກແຜນການ ແລະ ການລົງທຶນພ້ອມກັບບັນດາເຈົ້າຂອງໂຄງການໃນແຕ່ລະພະແນກ ແລະ ຂັ້ນເມືອງມີຄວາມຊຶມຊັບໃນລະບົບຂອງພິແຄັບ 2. ເພື່ອບັນລຸຈຸດປະສົງນີ້ແມ່ນ ມີຄວາມຈຳເປັນຕ້ອງມີການສື່ສານທີ່ໃກ້ຊິດ ເປັນພາສາລາວເຊິ່ງຂ້າພະເຈົ້າເອງກໍ່ກຳລັງມຸ້ງມັ້ນໃນການຮຽນພາສານີ້ຢູ່.



ພະແນກແຜນການ ແລະ ການລົງທຶນ ແຂວງ ສາລະວັນ (DPI)

ຂ້າພະເຈົ້າກໍ່ຫວັງວ່າຈະມີຄົນເຂົ້າໃຈລະບົບຂອງພິແຄັບ 2 ຫຼາຍຂຶ້ນ ແລະ ປະຕິບັດພ້ອມໃນເວລາທີ່ຂ້າພະເຈົ້າຈະຕ້ອງໄປຈາກແຂວງສາລະວັນ.

ສຸດທ້າຍນີ້ຂ້າພະເຈົ້າກໍ່ຂໍກ່າວຄຳສຸພາສິດ ທີ່ຂ້າພະເຈົ້າມັກຫຼາຍທີ່ສຸດ ທີ່ໝູ່ຄົນລາວໄດ້ບອກຂ້າພະເຈົ້າວ່າ "ຄວາມສາມັກຄີແມ່ນນຳໄປສູ່ຜົນສຳເລັດ." ຂ້າພະເຈົ້າຈະພະຍາຍາມສຳນຶກໃນໜ້າວຽກ ແລະ ຈັດຕັ້ງປະຕິບັດວຽກດັ່ງກ່າວໃນທຸກໆເວລາ ແລະ ທ້າຍສຸດນີ້ຂ້າພະເຈົ້າກໍ່ຂໍອວຍພອນໃຫ້ທຸກໆທ່ານມີສຸຂະພາບ ແລະ ພັດທະນາການທີ່ດີ.

# ສະມາຊິກ 2 ທ່ານ ຂອງອົງການອາສາສະໝັກການຮ່ວມມື ກັບຕ່າງປະເທດຂອງປະເທດຍີ່ປຸ່ນ ຮ່ວມກັບໂຄງການ ພີແຄັບ 2

## ນີ້ແມ່ນການແນະນຳຕົວ ອາສາສະມໝັກຈາກ ແຂວງ ຄຳມ່ວນ ທີ່ມີສ່ວນຮ່ວມໃນກິດຈະກຳຂອງໂຄງການ ພີແຄັບ 2

## ທ່ານ ໄຕເຊ ອິຊູກະ

### ພະແນກແຜນການ ແລະ ການລົງທຶນ ແຂວງ ຄຳມ່ວນ (DPI)

ຍິນດີທີ່ໄດ້ຮູ້ຈັກ ຂ້າພະເຈົ້າຊື່ ໄຕເຊ ອິຊູກະ ເປັນສະມາຊິກຂອງອົງການອາສາສະໝັກການຮ່ວມມື ກັບຕ່າງ ປະເທດຂອງປະເທດຍີ່ປຸ່ນ (JOCV: Japan Overseas Cooperation Volunteers) (ເຊິ່ງໄລຍະເວລາ ການປະຕິບັດວຽກຂອງຂ້າພະເຈົ້າແມ່ນລະຫວ່າງເດືອນ ມັງກອນ 2010 ຫາ ເດືອນ ມັງກອນ 2012). ປະຈຸບັນນີ້ຂ້າພະເຈົ້າມີສ່ວນຮ່ວມໃນກິດຈະກຳຂອງພີແຄັບ 2 ຢູ່ແຂວງຄຳມ່ວນ. ວຽກຂອງຂ້າພະເຈົ້າກໍ່ຄືການຄຸ້ມຄອງໂຄງການລົງທຶນຂອງລັດໃຫ້ດີ ອີງໃສ່ວິທີການຂອງພີແຄັບ 2 ພ້ອມກັບພະນັກງານພະແນກແຜນການ ແລະ ການລົງທຶນຂອງແຂວງຄຳມ່ວນ. ຂ້າພະເຈົ້າຄິດວ່າຂ້າພະເຈົ້າສາມາດຊ່ວຍໃນດ້ານ ການຄຸ້ມຄອງທາງດ້ານການເງິນທີ່ພີແຄັບ 2 ໄດ້ນຳສະເໜີ ເພາະວ່າຂ້າພະເຈົ້າໄດ້ເຄີຍມີສ່ວນຮ່ວມໃນການຄຸ້ມຄອງທຶນ ແລະ ງົບປະມານຕອນເຮັດວຽກຢູ່ບໍລິສັດຍີ່ປຸ່ນ. ເວລາໄດ້ຜ່ານໄປ 3 ເດືອນແລ້ວຕັ້ງແຕ່ຂ້າພະເຈົ້າໄດ້ມາເຮັດວຽກຢູ່ແຂວງຄຳມ່ວນ. ໃນເວລາ 3 ເດືອນນີ້ຂ້າພະເຈົ້າກໍ່ໄດ້ພະຍາ ຍາມເຂົ້າໃຈກ່ຽວກັບການນຳໃຊ້ວິທີການຂອງພີແຄັບ 2 ໃນໜ້າວຽກ, ລະບົບການບໍລິຫານຂອງລັດຖະບານລາວ, ແລະ ການບໍລິຫານ ຫ້ອງການ ແລະ ໜ້າວຽກ ຂອງພະແນກແຜນການ ແລະ ການລົງທຶນຂອງແຂວງຄຳມ່ວນ. ຮອດປະຈຸບັນນີ້ຂ້າພະເຈົ້າໄດ້ເອົາໃຈໃສ່ໃນການຮຽນຮູ້ສຳລັບຕົວຂ້າພະເຈົ້າເອງ, ແຕ່ຖ້າຂ້າພະເຈົ້າໄດ້ເຂົ້າໃຈສະພາບໃນປະຈຸບັນໄດ້ເລິກກ່ວານີ້, ຂ້າພະເຈົ້າກໍ່ຢາກຫັນມາປະຕິບັດໃຫ້ວ່ອງໄວຂຶ້ນ, ເຊັ່ນການສະເໜີໃຫ້ມີການນຳໃຊ້ວິທີການຂອງພີແຄັບ 2 ເຊິ່ງເປັນຜູ້ແນະນຳ ແລະ ປັບປຸງວິທີການໃໝ່. ແນວໃດກໍ່ຕາມບາງຄັ້ງໃນວຽກຕົວຈິງກໍ່ບໍ່ສາມາດເຮັດທັນໄດ້. ຂ້າພະເຈົ້າ, ໃນຖານະທີ່ເປັນສະມາຊິກຂອງອົງການອາສາສະໝັກການຮ່ວມມື ກັບຕ່າງປະເທດຂອງປະເທດຍີ່ປຸ່ນທີ່ປະຈຳການຢູ່ກັບທີ, ຈະພະຍາຍາມຊອກຫາ ແລະ ແກ້ໄຂບັນຫາໃຫ້ດີທີ່ສຸດໂດຍການສື່ສານແບບໃກ້ຊິດກັບພະນັກງານພີແຄັບ ແລະ ພະນັກງານພະແນກແຜນການ ແລະ ການລົງທຶນຂອງແຂວງຄຳມ່ວນ.




ພະແນກແຜນການ ແລະ ການລົງທຶນ ແຂວງ ຄຳມ່ວນ (DPI)

# ບົດລາຍງານກອງປະຊຸມຄະນະກຳມະການປະສານງານຮ່ວມ ຄັ້ງທີ 4




(ແຕ່ຊ້າຍຫາຂວາ): ທ່ານ ວິໄຊ ຊາວັນນາ (ອາດີດຫົວໜ້າກົມປະເມີນຜົນ, ກະຊວງ ຜທ), ທ່ານ ດຣ. ບຸນທະວີ ສີສຸພັນທອງ(ລັດຖະມົນຕີຊ່ວຍ, ກະຊວງ ຜທ ແລະ ປະທານກອງປະຊຸມ), ທ່ານ ໂທກະອາ ມາຊາໂຕະ (ຜູ້ຕາງໜ້າອົງການ ໄຈກາປະຈຳ ສປປ ລາວ) ແລະ ທ່ານ ອີຊີໂຣະ ໂອກຸມູຣະ (ຫົວໜ້າທີມທີ່ປຶກສາຂອງໂຄງການ ພີແຄັບ 2)

ກອງປະຊຸມຄະນະກຳມະການປະສານງານ (JCC) ແມ່ນກອງປະຊຸມທີ່ໄດ້ຖືກຈັດຂື້ນທຸກໆ 6 ເດືອນ ຢູ່ຂັ້ນສູນກາງ ເພື່ອກວດກາ ແລະ ທົບທວນຄືນຄວາມຄືບໜ້າໂດຍລວມຂອງໂຄງການ. ໃນວັນທີ 31 ມີນາ 2010 ໄດ້ມີການຈັດກອງປະຊຸມດັ່ງກ່າວຂື້ນເປັນຄັ້ງທີ 4 ຂື້ນທີ່ໂຮງແຮມ ລາວພຣາຊາ ເຊິ່ງຜູ້ເຂົ້າຮ່ວມມີ ທ່ານ ດຣ. ບຸນທະວີ ສີສຸພັນທອງ, ລັດຖະມົນຕີຊ່ວຍ ກະຊວງ ແຜນການ ແລະ ການລົງທຶນ, ປະທານກອງປະຊຸມ ແລະ ຫົວໜ້າໂຄງການ ພີແຄັບ 2 ແລະ ບັນດາສະມາຊິກກອງປະຊຸມ: ທ່ານ ວິໄຊ ຊາວັນນາ (ອາດີດຫົວໜ້າກົມປະເມີນຜົນ, ກະຊວງ ແຜນການ ແລະ ການລົງທຶນ ແລະ ເປັນຜູ້ບໍລິຫານໂຄງການພີແຄັບ 2), ທ່ານ ອຸ່ນເຮືອນ ຈິດຕະພົງ (ຮອງຫົວໜ້າກົມແຜນການ, ກະຊວງ ແຜນການ ແລະ ການລົງທຶນ ແລະ ເປັນຮອງຜູ້ບໍລິຫານໂຄງການ ພີແຄັບ 2), ທ່ານ ໂທກະອາ ມາຊາໂຕະ (ຜູ້ຕາງໜ້າອົງການໄຈກາປະຈຳ ສປປ ລາວ) ແລະ ທ່ານ ອີຊີໂຣະ ໂອກຸມູຣະ (ຫົວໜ້າທີມທີ່ປຶກສາຂອງໂຄງການ ພີແຄັບ 2) ພ້ອມດ້ວຍຜູ້ເຂົ້າຮ່ວມ 38 ທ່ານ ຈາກກົມແຜນການ, ກົມປະເມີນຜົນ, ກົມຮ່ວມມືສາກົນ, ກົມຈັດຕັ້ງ ແລະ ພະນັກງານ ແລະ ພະນັກງານຈຳນວນໜຶ່ງຈາກ ກະຊວງການເງິນ.

ປະເດັນສຳຄັນຂອງກອງປະຊຸມຄັ້ງທີ 4 ນີ້ແມ່ນ:

1. ການນຳສະເໜີກ່ຽວກັບກົດໝາຍການລົງທຶນລັດທີ່ຖືກອະນຸມັດ.
2. ການລາຍງານຜົນຂອງການຝຶກອົບຮົມຄັ້ງຫລ້າສຸດ ກ່ຽວກັບການຄຸ້ມຄອງການລົງທຶນລັດຢູ່ບັນດາແຂວງ ແລະ ກະຊວງ.
3. ການນຳສະເໜີກ່ຽວກັບຂັ້ນຕອນຂອງການຝຶກອົບຮົມໜ້າວຽກ (On the Job Training).
4. ຜົນຂອງການຝຶກອົບຮົມການຄຸ້ມຄອງທາງດ້ານການເງິນ.
5. ການນຳສະເໜີກ່ຽວກັບການຄຸ້ມຄອງທຶນສົມທົບ ODA ແລະ
6. ກິດຈະກຳສຳລັບ 6 ເດືອນ ຂ້າງໜ້າ.

ກິດຈະກຳທີ່ໂຄງການ ພີແຄັບ 2 ແລະ ກະຊວງ ແຜນການ ແລະ ການລົງທຶນ ຈະຈັດຂື້ນໃນຕໍ່ໜ້າມີດັ່ງຕໍ່ໄປນີ້:

1. ການສະໜັບສະໜູນຂັ້ນຕອນການສະເໜີຂໍງົບສົກປີ 2010/2011
2. ການປະເມີນການຝຶກອົບຮົມ/ການປະເມີນຜົນຂອງການປະເມີນ
3. ການສະໜັບສະໜູນກົດໝາຍວ່າດ້ວຍການລົງທຶນລັດ
4. ການປັບປຸງຄູ່ມື
5. ການກະກຽມການຝຶກອົບຮົມທທີ່ວປະເທດຄັ້ງທີ 3 ຂອງໂຄງການພີແຄັບ 2 ແລະ
6. ການຝຶກອົບຮົມຢູ່ປະເທດທີ 3.

ລາຍງານໂດຍ: ທ່ານ ນ. ມຸທິຕາ ພອນເພັດຣັດ
ທ່ານ ນ. ດວງໃຈ ອິນແກ້ວ
ທີ່ປຶກສາພາຍໃນຂອງໂຄງການ ພີແຄັບ 2

*ຂໍເຊີນ ເຂົ້າມາເບິ່ງເວັບໄຊ ແລ້ວສົ່ງຄຳຄິດຄຳເຫັນຂອງທ່ານມາຫາພວກເຮົາ ພວກເຮົາມີຄວາມດີໃຈເປັນຢ່າງຍິ່ງ ທີ່ຈະໄດ້ຮັບຟັງຄຳແນະນຳ ຂອງພວກທ່ານ ເພື່ອມາປັບປຸງເວັບໄຊ! ທ່ານສາມາດສົ່ງຄຳຄິດເຫັນມາທີ່* →
jicapcap@laopdr.com ແລະ PCAP2@icnet.co.jp

ທີ່ຢູ່ຫ້ອງການ PCAP2:
ທີ່ຢູ່ທາງໄປສະນີ : c/o JICA Laos Office,
P.O.BOX 3933 Vientiane, LAOS
ໂທລະສັບ (ຫ້ອງການ)/FAX : +856-21-243-687